ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງສະໜາມບິນລາວ

ເລກທີ 0335 ກສລ

ນະຄອນຫລວງວຽງຈັນ, ວັນທີ 29 ມັງກອນ 2024

# ໜັງສືແຈ້ງເຊີນປະມູນ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບວຽກບໍາລຸງຮັກສາ ແລະ ສ້ອມແປງອຸປະກອນເຕັກນິກ ແລະ ສິ່ງອໍານວຍຄວາມສະດວກຢູ່ສະໜາມບິນສາກົນຫລວງພະບາງ(ປະເພດ: ງວງຊ້າງ, ລະບົບຄວບຄຸມໄຟພາກເດີ່ນ ແລະ ຂັ້ນໄດເລື່ອນ) ໄລຍະການປະຕິບັດວຽກແມ່ນ 90 ວັນ;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການສະໜອງ ຫລື ສ້ອມແປງອຸປະກອນດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ຈັນມະນີ ຄູນໄຊຍະບົວສີ ໂທລະສັບ: 020 55686696 ແລະ ທ່ານ ນາງ ດາລີນ້າ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ້ມແຕ່ວັນທີ 29 ມັງກອນ 2024 ເປັນຕົ້ນໄປ, ໃນລາຄາ 5.000.000 ກີບ ຫລື ເປັນສະກຸນເງິນອື່ນທຽບເທົ່າ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 14:00 ນາທີ ຂອງວັນທີ 05 ມີນາ 2024 ທີ່ຫ້ອງປະຊຸມເບີ 01 ກອງສະໜາມບິນລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 14:10 ນາທີ ຂອງວັນທີ ແລະ ສະຖານທີ່ຮັບຊອງປະມູນ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາຕາມສະຖານທີ່ຂ້າງລຸ່ມນີ້;
7. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542. ສໍານັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.

ເຊັນແທນ ຫົວໜ້າກອງ

ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ ກະ...ສະໜາມບິນລາວ

ຄໍາສະຫວັນ ລີສົມບູນ

K... SYSOMBOUN